ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

0884
ເລກທີ ________/ກປ
09 JAN 2023
ນະຄອນຫຼວງວຽງຈັນ, ວັນທີ ........................

# ຂໍ້ຕົກລົງ

## ວ່າດ້ວຍການອະນຸມັດນຳໃຊ້ເວບໄຊຂອງກົມຈັດຕັ້ງ ແລະ ພະນັກງານ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ ລົງວັນທີ 15 ຕຸລາ 2021;
- ອີງຕາມ ແຜນດຳເນີນງານຂອງກົມຈັດຕັ້ງ ແລະ ພະນັກງານ ແຕ່ປີ 2021-2025 ສະບັບເລກທີ 2441/ກຈພ ລົງວັນທີ 18 ກັນຍາ 2020;
- ອີງຕາມ ໜັງສືສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 0015/ກຈພ ລົງວັນທີ 09 ມັງກອນ 2023.

**ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຕົກລົງ:**

**ມາດຕາ 1** ເຫັນດີອະນຸມັດໃຫ້ກົມຈັດຕັ້ງ ແລະ ພະນັກງານ ເປີດນຳໃຊ້ ເວບໄຊ (website) ຂອງກົມຈັດຕັ້ງ ແລະ ພະນັກງານ https://dop.maf.gov.la ເພື່ອເກັບກຳ, ເຜີຍແຜ່ ແລະ ແລກປ່ຽນຂໍ້ມູນຂ່າວສານ, ບັນດານິຕິກຳ ກ່ຽວກັບວຽກງານຈັດຕັ້ງ, ພັກ-ພະນັກງານ; ວຽກງານຄຸ້ມຄອງພະນັກງານ-ລັດຖະກອນ; ວຽກງານພັດທະນາການບໍລິຫານລັດ, ວຽກງານພັດທະນາຊັບພະຍາກອນມະນຸດ ຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ວຽກງານອື່ນໆທີ່ກ່ຽວຂ້ອງ.

**ມາດຕາ 2** ມອບໃຫ້ກົມຈັດຕັ້ງ ແລະ ພະນັກງານ ສົມທົບກັບຫ້ອງການ, ບັນດາກົມ, ສະຖາບັນອ້ອມຂ້າງກະຊວງ ບັນດາສູນ, ວິທະຍາໄລ, ໂຮງຮຽນ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້; ບັນດາພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອນຳໃຊ້ລະບົບເວບໄຊດັ່ງກ່າວໃຫ້ເກີດປະໂຫຍດສູງສຸດ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

**ມາດຕາ 3** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ປ່າໄມ້ ★ ລັດຖະມົນຕີ ★

ປອ. ເພັດ ພົມພິພັກ

ບ່ອນນຳສົ່ງ:

| | | |
|---|---|---|
| 1. | ກົມຈັດຕັ້ງ ແລະ ພະນັກງານ | 01 ສະບັບ |
| 2. | ຫ້ອງການ, ບັນດາກົມ, ສະຖາບັນ | 01 ສະບັບ |
| 3. | ບັນດາສູນ, ວິທະຍາໄລ, ໂຮງຮຽນ | 01 ສະບັບ |
| 4. | ພະແນກກະສິກຳ ແລະ ປ່າໄມ້ແຂວງ | 01 ສະບັບ |